# ທະນາຄານແຫ່ງ ສປປ ລາວ
# ຮັບມະຫາຊົນເກືອບ 100 ຄົນ ເຂົ້າເປັນສະມາຊິກກຳມະບານ





✸ ຂ່າວ: ຣັດສະໝີ ດວງສັດຈະ

ອົງການຈັດຕັ້ງກຳມະບານທະນາຄານແຫ່ງ ສປປ ລາວ ໄດ້ຈັດຕັ້ງພິທີຮັບເອົາມະຫາຊົນຜູ້ທີ່ກ້າວໜ້າຈຳນວນເກືອບ 100 ສະຫາຍ ເຂົ້າເປັນສະມາຊິກກຳມະບານ, ພິທີດັ່ງກ່າວໄດ້ຈັດຂຶ້ນຢູ່ຫ້ອງປະຊຸມທະນາຄານແຫ່ງ ສປປ ລາວ ໃນວັນທີ 23 ທັນວາ ຜ່ານມາ ໂດຍການໃຫ້ກຽດເປັນປະທານຂອງສະຫາຍອາລຸນ ບຸນຍົງ ປະທານຄະນະກຳມະບານຮາກຖານທະນາຄານແຫ່ງ ສປປ ລາວ ພ້ອມນີ້ກໍມີບັນດາຜູ້ຕາງໜ້າອົງການຈັດຕັ້ງມະຫາຊົນ, ບັນດາຄະນະນຳກຳມະບານ ແລະ ມະຫາຊົນຜູ້ກ້າວໜ້າເຂົ້າຮ່ວມຢ່າງຄົບຖ້ວນ.

ສະຫາຍປະທານຄະນະກຳມະບານຮາກຖານໄດ້ໃຫ້ກຽດມອບໃບອະນຸມັດເຂົ້າກຳມະບານໃຫ້ບັນດາສະຫາຍມະຫາຊົນຜູ້ທີ່ກ້າວໜ້າຈຳນວນເກືອບ 100 ສະຫາຍ, ຈາກນັ້ນສະຫາຍປະທານກຳມະບານຮາກຖານກໍໄດ້ໃຫ້ກຽດໂອ້ລົມໂດຍສະຫາຍໄດ້ຕີລາຄາສູງຕໍ່ຜົນງານຂອງບັນດາສະຫາຍທີ່ຮັບເຂົ້າເປັນສະມາຊິກກຳມະບານໃໝ່ ເພາະກ່ອນການຮັບເຂົ້າໃນອົງການຈັດຕັ້ງກຳມະບານ ສະຫາຍເຫຼົ່ານີ້ໄດ້ຜ່ານຜ່າໜ້າວຽກ ແລະ ຄວາມຮັບຜິດຊອບອັນໃຫຍ່ຫຼວງຢູ່ໃນບັນດາກົມກອງ, ຫ້ອງການ, ສະຖາບັນ, ສູນ ແລະ ໂຮງງານທີ່ຂຶ້ນກັບທະນາຄານແຫ່ງ ສປປ ລາວ ແລະ ສະຫາຍດັ່ງກ່າວໄດ້ກາຍເປັນແບບຢ່າງທີ່ດີໃນການເຮັດໜ້າທີ່ ແລະ ຮຽກຮ້ອງໃຫ້ທຸກສະຫາຍຈົ່ງເສີມຂະຫຍາຍມູນເຊື້ອ ແລະ ເພີ່ມພູນຄູນສ້າງຄວາມດີ, ມີຄວາມສາມັກຄີ, ມີຄວາມຮັບຜິດຊອບ, ຊື່ສັດຕໍ່ໜ້າທີ່, ມີແນວຄິດຈົ່ງຮັກພັກດີຕໍ່ພັກ, ຕໍ່ລັດ ແລະ ກຽມພ້ອມເຮັດທຸກຄຳສັ່ງທີ່ພັກ ແລະ ປະເທດຊາດມອບໝາຍໃຫ້, ຈາກນັ້ນກໍມີຜູ້ຕາງໜ້າສະມາຊິກກຳມະບານໃໝ່ກໍໄດ້ຮັບຄຳໂອ້ວາດຕັກເຕືອນ ແລະ ພ້ອມກັນຈະສືບຕໍ່ເຮັດໜ້າທີ່ໃຫ້ດີຂຶ້ນກວ່າເກົ່າ.